ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກົມຊັບພະຍາກອນນໍ້າ

188
ເລກທີ ........../ກຊນ
ນະຄອນຫຼວງວຽງຈັນ, ວັນທີ 03 ມນ 2017

ຮຽນ: ທ່ານ ລັດຖະມົນຕີ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ເລື່ອງ: ຂໍທິດຊີ້ນຳ ເພື່ອສ້າງຂະບວນການເນື່ອງໃນ ວັນນໍ້າໂລກ ປະຈຳປີ 2017.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມຊັບພະຍາກອນນໍ້າສະບັບເລກທີ 3089/ກຊສ, ລົງວັນທີ 17 ພຶດສະພາ 2012.

ກົມຊັບພະຍາກອນນໍ້າ ຂໍຖືເປັນກຽດ ຮຽນມາຍັງທ່ານ ຊາບວ່າ: ກົມຊັບພະຍາກອນນໍ້າ ໄດ້ກະກຽມ ສ້າງຂະບວນການ ເນື່ອງໃນວັນນໍ້າໂລກ ປະຈຳປີ 2017 ຂຶ້ນ ຄືກັບທຸກໆປີ ຊຶ່ງໃນປີນີ້ ວັນນໍ້າໂລກ ມີຫົວຂໍ້ "ນໍ້າເປື້ອນ" (Waste Water), ຊຶ່ງມີເປົ້າໝາຍ ເພື່ອກະຕຸກຊຸກຍູ້ ແລະ ສົ່ງເສີມໃຫ້ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ເຂົ້າໃຈ ແລະ ເຂົ້າຮ່ວມ ໃນການຄຸ້ມຄອງ ຊັບພະຍາກອນນໍ້າ ນັບມື້ ນັບຫຼາຍຂຶ້ນ ເປັນຕົ້ນ ບັນດາຂະແໜງການ ອ້ອມຂ້າງສູນກາງ, ອຳນາດການປົກຄອງທ້ອງຖິ່ນ, ພາກສ່ວນເອກະຊົນ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ, ພ້ອມດຽວກັນນັ້ນ ກໍເປັນການປະກອບສ່ວນ ໃນການສ້າງຂະບວນການເນື່ອງໃນ ວັນນໍ້າໂລກ ຄືກັນກັບຫຼາຍໆປະເທດໃນໂລກ.

ແຜນການຈັດກິດຈະກຳ ເພື່ອສ້າງຂະບວນການສະເຫຼີມສະຫຼອງໃນວັນດັ່ງກ່າວ ມີດັ່ງລຸ່ມນີ້:

1. ອອກສານທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໃນໂອກາດວັນນໍ້າໂລກ ຜ່ານທາງໂທລະພາບ, ວິທະຍຸ, ໜັງສືພິມ ແລະ ເວບໄຊ.

2. ການນຳ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ນະຄອນຫຼວງວຽງຈັນ ມີຄຳເຫັນຕໍ່ວັນນໍ້າໂລກ 2017 ໃນພິທີເປີດກອງປະຊຸມ ສຳມະນາ ວິທະຍາສາດ ກ່ຽວກັບ "ນໍ້າເປື້ອນ" ຈັດໂດຍ ພະແນກ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ຮ່ວມກັບ ກົມຊັບພະຍາກອນນໍ້າ.

3. ຈັດກິດຈະກຳຕ່າງໆ ເພື່ອສ້າງຂະບວນການຕ່າງໆ ຕ້ອນຮັບວັນນໍ້າໂລກ

3.1 ນຳພານັກສຶກສາ ໄປສຶກສາຕົວຈິງ ກ່ຽວກັບ ການຄຸ້ມຄອງ ຊັບພະຍາກອນນ້ຳ ແລະ ເຂດບອດໄກ ບຸ່ສອນ ສາທິດແຫ່ງຊາດ ກ່ຽວກັບ ການຄຸ້ມຄອງ ຊັບພະຍາກອນນ້ຳ ແບບປະສົມປະສານ 2 ຄັ້ງ (ຄັ້ງທີ 1 ວັນທີ 3-5 ມີນາ 2017; ຄັ້ງທີ 2 ວັນທີ 10-11 ມີນາ 2017);

3.2 ຈັດກອງປະຊຸມ ປຶກສາຫາລື ກ່ຽວກັບ ການຄຸ້ມຄອງຄຸນນະພາບນ້ຳໃນຕົວເມືອງ ພ້ອມທັງ ລົງສຳຫຼວດ ຮ່ອງແຊງ, ຮອງໄກ່ແກ້ວ ແລະ ຮ່ອງປ່າສັກ (ສາຂາ ຂອງຫ້ວຍໝາກຮຽວ) ເພື່ອວາງແຜນໃນການຄຸ້ມຄອງ ຫ້ວຍໝາກຮຽວ ຈັດໂດຍ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮ່ວມກັບ ກົມ ຊັບພະຍາກອນນ້ຳ ແລະ Dyna green Environmental protection group co.ltd Hongkong;

3.3 ຈັດກອງປະຊຸມ ປຶກສາຫາລື ໃສ່ຮ່າງນິຕິກາ ລຸ່ມກົດໝາຍ ເຊັ່ນ: ລະບຽບ ວ່າດ້ວຍ ການຄຸ້ມຄອງອ່າງ ຮັບນ້ຳ, ລະບຽບ ວ່າດ້ວຍ ການຄຸ້ມຄອງທີ່ດິນບໍລິເວນນ້ຳ, ລະບຽບ ວ່າດ້ວຍ ການຄຸ້ມຄອງນ້ຳໃຕ້ດິນ, ລະບຽບ ວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານ ຊັບພະຍາກອນນ້ຳ, ລະບຽບ ວ່າດ້ວຍ ການຄຸ້ມຄອງຄຸນ ນະພາບນ້ຳ.

4. ໂຄສະນາຜ່ານ ໂທລະພາບ, ວິທະຍຸ ໜັງສືພິມ ໂດຍການອອກບົດຄວາມ ເພື່ອສ້າງຈິດສຳນຶກ ໃຫ້ມວນຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈເຖິງຄວາມສຳຄັນ ຂອງຊັບພະຍາກອນນ້ຳ ແລະ ເຂົ້າຮ່ວມ ໃນການປົກ ປັກຮັກສາ ຊັບພະຍາກອນດັ່ງກ່າວ.

5. ແຈ້ງໃຫ້ທ້ອງຖິ່ນ ສ້າງຂະບວນການ ເນື່ອງໃນ ວັນນ້ຳໂລກ ຕາມເງື່ອນໄຂ ແລະ ຄວາມສາມາດ ຂອງທ້ອງຖິ່ນ.

6. ສ້າງກິດຈະກຳອື່ນໆ ເພື່ອເປັນການສ້າງຂະບວນການ ເນື່ອງໃນ ວັນນ້ຳໂລກ ຕາມເງື່ອນໄຂ ແລະ ຄວາມສາມາດ ຂອງກົມ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຂໍທິດຊີ້ນຳຕາມທາງຄວນດ້ວຍ.

ຫົວໜ້າ ກົມຊັບພະຍາກອນນ້ຳ

ຈັນທະເນດ ບົວລະພາ